iOffice - Downloaded By khampaserd



012760

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ
ຫ້ອງການ

ເລກທີ 3436 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 04 ທັນວາ 2022

**ຮຽນ:** ທ່ານ ລັດຖະມົນຕີ ກະຊວງການເງິນ ທີ່ເຄົາລົບຢ່າງສູງ.
(ໂດຍຜ່ານ ທ່ານ ຮອງລັດຖະມົນຕີ ກະຊວງການເງິນ, ຜູ້ຊີ້ນໍາວຽກງານຫ້ອງການ)

**ເລື່ອງ:** ລາຍງານ ຜົນການເຂົ້າຮ່ວມກອງປະຊຸມປຶກສາຫາລື ກ່ຽວກັບ ແຜນການສ້າງ ແລະ ປັບປຸງກົດໝາຍປະຈໍາປີ 2023 – 2025.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ ກະຊວງການເງິນ ສະບັບເລກທີ 6118/ກງ, ລົງວັນທີ 10 ທັນວາ 2021;
- ອີງຕາມ ໜັງສືຂອງກະຊວງການເງິນ ສະບັບເລກທີ 2493/ກງ, ລົງວັນທີ 25 ສິງຫາ 2022;
- ອີງຕາມ ແຈ້ງການເຊີນ ຂອງສະພາແຫ່ງຊາດ ສະບັບເລກທີ 568/ຄລສ.ກໝ, ລົງວັນທີ 23 ພະຈິກ 2022;
- ອີງຕາມ ທິດຊີ້ນໍາຂອງ ທ່ານ ລັດຖະມົນຕີ ກະຊວງການເງິນ ຄັ້ງວັນທີ 24 ພະຈິກ 2022.

ຫ້ອງການ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບ ກ່ຽວກັບ ຜົນການເຂົ້າຮ່ວມກອງປະຊຸມດັ່ງກ່າວ. ສັງລວມກົດໝາຍທີ່ມອບໃນແຜນການສ້າງ ແລະ ປັບປຸງ ຂອງຂະແໜງການເງິນ ແຕ່ປີ 2023 ຫາ 2025 ມີທັງໝົດ 7 ສະບັບ, ໃນນີ້: ສ້າງໃໝ່ 4 ສະບັບ ແລະ ປັບປຸງ 3 ສະບັບ. ສໍາລັບກົດໝາຍວ່າດ້ວຍ ຄັງເງິນແຫ່ງລັດ (ສ້າງໃໝ່) ຕາມໜັງສື ສະບັບເລກທີ 2493/ກງ, ລົງວັນທີ 25 ສິງຫາ 2022 ທີ່ກະຊວງການເງິນ ໄດ້ສະເໜີຫາຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເບື້ອງຕົ້ນຈະເອົາເຂົ້າຜ່ານກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX ປີ 2023. ຈາກນັ້ນ, ສະພາແຫ່ງຊາດ ໄດ້ນໍາເອົາແຜນການສ້າງ ແລະ ປັບປຸງກົດໝາຍແຕ່ປີ 2023 ຫາ 2025 ເຂົ້າຜ່ານກອງປະຊຸມຍົກສູງຄຸນນະພາບເນື້ອໃນ ໃຫ້ແກ່ກອງປະຊຸມສະໄໝສາມັນ ຂອງສະພາແຫ່ງຊາດເທື່ອທີ 4, ຊຶ່ງຜົນຂອງການຄົ້ນຄວ້າ ແລະ ປະກອບຄໍາເຫັນຂອງກອງປະຊຸມ ໄດ້ສະເໜີເລື່ອນ ກົດໝາຍວ່າດ້ວຍ ຄັງເງິນແຫ່ງລັດ ຈາກກອງປະຊຸມເທື່ອທີ 6 ປີ 2023 ມາເປັນ ເທື່ອທີ 8 ປີ 2024. ພ້ອມດຽວກັນນັ້ນ, ຫ້ອງການ ກໍໄດ້ປະສານສົມທົບກັບຄັງເງິນແຫ່ງຊາດ ເພື່ອກວດກາ ແລະ ຢັ້ງຢືນຄືນ, ຊຶ່ງໄດ້ເຫັນດີເປັນເອກະພາບ ຕໍ່ກັບການສະເໜີເລື່ອນດັ່ງກ່າວ. ສ່ວນບັນດາກົດໝາຍອື່ນໆ ເປັນໄປຕາມແຜນທີ່ກະຊວງການເງິນໄດ້ສະເໜີ, ຊຶ່ງມີລາຍລະອຽດ ດັ່ງນີ້:

| ລ/ດ | ຊື່ກົດໝາຍ | ປີ | ຜ່ານກອງປະຊຸມສະໄໝສາມັນ | ກົມທີ່ຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|
| 1 | ກົດໝາຍວ່າດ້ວຍ ອາກອນທີ່ດິນ ແລະ ສິ່ງກໍ່ສ້າງ (ສ້າງໃໝ່) | 2023 | ເທື່ອທີ 5 | ກົມສ່ວຍສາອາກອນ | ເລື່ອນມາຈາກກອງປະຊຸມເທື່ອທີ 4 |
| 2 | ກົດໝາຍວ່າດ້ວຍ ການຄຸ້ມຄອງໜີ້ສິນສາທາລະນະ (ປັບປຸງ) | 2023 | ເທື່ອທີ 6 | ກົມຄຸ້ມຄອງໜີ້ສິນສາທາລະນະ | |
| 3 | ກົດໝາຍວ່າດ້ວຍ ການບັນຊີ (ປັບປຸງ) | 2023 | ເທື່ອທີ 6 | ກົມຄຸ້ມຄອງການບັນຊີ | |
| 4 | ກົດໝາຍວ່າດ້ວຍ ການກວດສອບອິດສະຫຼະ (ປັບປຸງ) | 2024 | ເທື່ອທີ 7 | | |

iOffice - Downloaded By khampaserd



| | | | | | |
|---|---|---|---|---|---|
| 5 | ກົດໝາຍວ່າດ້ວຍ ອາກອນສິ່ງແວດລ້ອມ (ສ້າງໃໝ່) | 2024 | ເທື່ອທີ 8 | ກົມສ່ວຍສາອາກອນ | |
| 6 | ກົດໝາຍວ່າດ້ວຍ ຄັງເງິນແຫ່ງລັດ (ສ້າງໃໝ່) | 2024 | ເທື່ອທີ 8 | ຄັງເງິນແຫ່ງຊາດ | ເລື່ອນມາຈາກກອງປະຊຸມເທື່ອທີ 6 |
| 7 | ກົດໝາຍວ່າດ້ວຍ ຄວາມໝັ້ນຄົງທາງດ້ານການເງິນ (ສ້າງໃໝ່) | 2025 | ເທື່ອທີ 9 | ກົມນະໂຍບາຍການເງິນ | |

ຜ່ານການເຂົ້າຮ່ວມກອງປະຊຸມ, ສາມາດສັງລວມບາງບັນຫາ ແລະ ຂໍ້ສະເໜີ ດັ່ງນີ້:

1. ກອງປະຊຸມ ໄດ້ສະເໜີໃຫ້ລັດຖະບານ ກໍຄື ກະຊວງການເງິນ ພິຈາລະນາຄົ້ນຄວ້າ ແລະ ຈັດສັນງົບປະມານຈຳນວນໜຶ່ງ ສຳລັບການຈັດກອງປະຊຸມສະໄໝວິສາມັນ ແຕ່ປີ 2023 ຫາ 2025 ແນໃສ່ເຮັດໃຫ້ແຜນການສ້າງ ແລະ ປັບປຸງກົດໝາຍ ທັງໝົດ ຈຳນວນ 73 ສະບັບ, ໃນນີ້: ສ້າງໃໝ່ 26 ສະບັບ ແລະ ປັບປຸງ 47 ສະບັບ ສາມາດເຮັດສຳເລັດຕາມແຜນການ;
2. ມາຮອດປັດຈຸບັນ ເຫັນວ່າ ຍັງມີຫຼາຍກົມທີ່ບໍ່ທັນສະເໜີແຕ່ງຕັ້ງຄະນະຊີ້ນຳລວມ ແລະ ຄະນະວິຊາການຄົ້ນຄວ້າການສ້າງ ແລະ ປັບປຸງກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ. ສະນັ້ນ, ເພື່ອຮັບປະກັນໃຫ້ບັນດາກົດໝາຍ ຂອງຂະແໜງການເງິນ ທີ່ນອນໃນແຜນການສ້າງ ແລະ ປັບປຸງ ແຕ່ປີ 2023 ຫາ 2025 ສາມາດເຮັດສຳເລັດຕາມກອບແຜນທີ່ໄດ້ກຳນົດໄວ້, ຫ້ອງການ ຈຶ່ງຮຽນສະເໜີມາຍັງທ່ານ ພິຈາລະນາຊີ້ນຳກົມກ່ຽວຂ້ອງທີ່ມີແຜນການສ້າງ ແລະ ປັບປຸງກົດໝາຍ ຮີບຮ້ອນດຳເນີນການແຕ່ຫົວທີ ຕາມກົດໝາຍ ແລະ ລະບຽບການວ່າດ້ວຍການສ້າງນິຕິກຳ, ພ້ອມທັງສະໜອງຂໍ້ມູນ ແລະ ລາຍງານໃຫ້ຫ້ອງການ ຮັບຊາບແຕ່ລະໄລຍະ ເພື່ອສັງລວມລາຍງານຄະນະນຳກະຊວງ ມີທິດຊີ້ນຳ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ ແລະ ພິຈາລະນາໃຫ້ທິດຊີ້ນຳຕາມເຫັນສົມຄວນດ້ວຍ.

**ຫົວໜ້າຫ້ອງການ**

ສົມບູນ ອິນທະປັດຖາ

**ບ່ອນນຳສົ່ງ:**

- ຄະນະນຳກະຊວງ, ທ່ານລະ 03 ສະບັບ;
- ບັນດາກົມກ່ຽວຂ້ອງ, ພາກສ່ວນລະ 01 ສະບັບ;
- ເກັບມ້ຽນ 01 ສະບັບ.